ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ທະນາຄານແຫ່ງ ສປປ ລາວ

ເລກທີ: ໑໔໙/ທຫລ.

ນະຄອນຫຼວງວຽງຈັນ, ວັນທີ: 23 OCT 2013

# ຂໍ້ຕົກລົງ
## ວ່າດ້ວຍລະບຽບການຈັດຊື້, ກໍ່ສ້າງ, ສ້ອມແປງ ແລະ ການໃຊ້ບໍລິການດ້ວຍທຶນຂອງທະນາຄານແຫ່ງ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1995 ແລະ ກົດໝາຍວ່າດ້ວຍການດັດແປງກົດໝາຍ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999;
- ອີງຕາມດຳລັດວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ສ້ອມແປງ ແລະ ບໍລິການດ້ວຍທຶນຂອງລັດ ສະບັບເລກທີ 03/ນຍ ລົງວັນທີ 9 ມັງກອນ 2004;
- ອີງຕາມລະບຽບການຈັດຊື້ສິນຄ້າ, ການກໍ່ສ້າງ, ສ້ອມແປງ ແລະ ບໍລິການດ້ວຍທຶນຂອງລັດ ສະບັບເລກທີ 0063/ກງ ລົງວັນທີ 12 ມີນາ 2004; ແລະ ສະບັບດັດແກ້ ເລກທີ 0861/ກງ ລົງວັນທີ 05 ພຶດສະພາ 2009;
- ອີງຕາມການສະເໜີຂອງ ທ່ານຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດລະບຽບຫຼັກການ ແລະ ວິທີການດຳເນີນການຈັດຊື້, ກໍ່ສ້າງ, ສ້ອມແປງ ແລະ ການໃຊ້ບໍລິການອື່ນໆ ດ້ວຍທຶນຂອງທະນາຄານແຫ່ງ ສປປ ລາວ ແນໃສ່ເພື່ອຮັບປະກັນການນຳໃຊ້ແຫຼ່ງທຶນໃຫ້ຖືກຕ້ອງ, ໂປ່ງໃສ, ປະຢັດມັດທະຍັດ ແລະ ມີປະສິດທິຜົນສູງ.

**ມາດຕາ 2. ນິຍາມຄຳສັບ**

ຄຳສັບຕ່າງໆ ທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງຕໍ່ໄປນີ້:



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

- ການປະມູນ ໝາຍເຖິງການແຂ່ງຂັນດ້ານລາຄາ ແລະ ຄຸນນະພາບໃນການສະໜອງສິນຄ້າ, ການກໍ່ສ້າງ, ສ້ອມແປງ ແລະ ການບໍລິການ;

- ເງິນຄໍ້າປະກັນການປະມູນ ໝາຍເຖິງຈຳນວນເງິນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນວາງໄວ້ເປັນການຄໍ້າປະກັນວ່າ ຂໍ້ສະເໜີປະມູນຂອງຕົນຈະຖືກຈັດຕັ້ງປະຕິບັດຖ້າຫາກຕົນເປັນຜູ້ຊະນະໃນການປະມູນ;

- ໜັງສືເຊີນປະມູນ ໝາຍເຖິງໜັງສືຂອງຫ້ອງການທະນາຄານແຫ່ງ ສປປ ລາວ ປະກາດຜ່ານສື່ມວນຊົນ ເພື່ອເຊີນຊວນບຸກຄົນ ແລະ ນິຕິບຸກຄົນ ເຂົ້າຮ່ວມການປະມູນ;

- ຜູ້ຮັບເໝົາ ຫຼື ຜູ້ສະໜອງ ໝາຍເຖິງບຸກຄົນ, ນິຕິບຸກຄົນ ທີ່ເຊັນສັນຍາກັບຜູ້ຈັດຊື້ ຫຼື ເຈົ້າຂອງໂຄງການ ໃນການສະໜອງສິນຄ້າ ຫຼື ຮັບເໝົາກໍ່ສ້າງ, ສ້ອມແປງ ແລະ ການບໍລິການ;

- ເປົ້າໝາຍຜູ້ເຂົ້າຮ່ວມປະມູນ ໝາຍເຖິງບຸກຄົນ ແລະ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ດ້ານການກໍ່ສ້າງ, ສ້ອມແປງ ຫຼື ໃຫ້ບໍລິການອື່ນໆ;

- ເຈົ້າຂອງໂຄງການ ໝາຍເຖິງທະນາຄານແຫ່ງ ສປປ ລາວ.

### ມາດຕາ 3. ການນຳໃຊ້ແຫຼ່ງທຶນ

ການນຳໃຊ້ແຫຼ່ງທຶນຂອງທະນາຄານແຫ່ງ ສປປ ລາວ ເພື່ອຈັດຊື້, ກໍ່ສ້າງ, ສ້ອມແປງ ແລະ ບໍລິການອື່ນໆ ທີ່ເປັນໂຄງການໃຫຍ່ ຕ້ອງໄດ້ປະຕິບັດຕາມແຜນການທີ່ໄດ້ຮັບຮອງຈາກສະພາບໍລິຫານທະນາຄານແຫ່ງ ສປປ ລາວ ແລະ ຕ້ອງຮັບປະກັນການປະຕິບັດຫຼັກການປະຢັດ, ໂປ່ງໃສ ແລະ ມີປະສິດທິຜົນສູງ.

ການຄິດໄລ່ລາຄາໃນການຈັດຊື້, ກໍ່ສ້າງ, ສ້ອມແປງ ແລະ ໃຊ້ບໍລິການອື່ນໆ ຕ້ອງສອດຄ່ອງກັບລາຄາຕົວຈິງໃນແຕ່ລະໄລຍະ.

## ໝວດທີ II

## ຮູບການຈັດຊື້, ກໍ່ສ້າງ, ສ້ອມແປງ ແລະ ໃຊ້ບໍລິການອື່ນໆ

### ມາດຕາ 4. ຮູບການ

ການຈັດຊື້, ກໍ່ສ້າງ, ສ້ອມແປງ ແລະ ໃຊ້ບໍລິການອື່ນໆ ດ້ວຍແຫຼ່ງທຶນຂອງທະນະຄານແຫ່ງ ສປປ ລາວ ດຳເນີນດ້ວຍສີ່ຮູບການ ຄື:

1. ການປະມູນເປີດກວ້າງ;
2. ການປະມູນວົງແຄບ;
3. ການສົມທຽບລາຄາ;
4. ການຈັດຊື້ໂດຍກົງ.

ມາດຕາ 5. ການປະມູນເປີດກວ້າງ

ການປະມູນເປີດກວ້າງ ແມ່ນຮູບການຈັດຊື້, ກໍ່ສ້າງ, ສ້ອມແປງ ແລະ ໃຊ້ບໍລິການອື່ນໆ ທີ່ມີມູນຄ່າເກີນ 500 ລ້ານກີບ (ຫ້າຮ້ອຍລ້ານກີບ) ຂຶ້ນໄປ ຊຶ່ງບໍ່ຈຳກັດຈຳນວນຜູ້ເຂົ້າຮ່ວມປະມູນ ແຕ່ຜູ້ເຂົ້າຮ່ວມປະມູນຕ້ອງມີເງື່ອນໄຂຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 15 ຂອງຂໍ້ກຳນົດສະບັບນີ້.

ມາດຕາ 6. ການປະມູນວົງແຄບ

ການປະມູນວົງແຄບ ແມ່ນຮູບການໜຶ່ງຂອງການຈັດຊື້, ສ້ອມແປງ ແລະ ໃຊ້ບໍລິການອື່ນໆ ຊຶ່ງມີມູນຄ່າເກີນ 100 ລ້ານກີບ (ໜຶ່ງຮ້ອຍລ້ານກີບ) ຫາ 500 ລ້ານກີບ (ຫ້າຮ້ອຍລ້ານກີບ) ຫຼື ຜູ້ສະໜອງມີຈຳນວນຈຳກັດ ຫຼື ເປັນໂຄງການທີ່ມີຄວາມຈຳເປັນຈະຕ້ອງຮັກສາເປັນຄວາມລັບ. ການປະມູນວົງແຄບໃຫ້ປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ຍົກເວັ້ນຂໍ້ 1 ຂອງມາດຕາ 10 ຊຶ່ງຄະນະປະມູນຈະແຈ້ງເຊີນບຸກຄົນ ຫຼື ນິຕິບຸກຄົນໂດຍກົງໃຫ້ເຂົ້າຮ່ວມແຂ່ງຂັນປະມູນ, ແຕ່ຈະບໍ່ປະກາດຜ່ານສື່ມວນຊົນ ແລະ ປະຕິບັດເງື່ອນໄຂຜູ້ເຂົ້າຮ່ວມແຂ່ງຂັນປະມູນຕາມມາດຕາ 15 ຂອງຂໍ້ຕົກລົງສະບັບນີ້.

ການແຂ່ງຂັນປະມູນວົງແຄບ ຕ້ອງມີຈຳນວນຜູ້ເຂົ້າຮ່ວມ 5 ພາກສ່ວນຂຶ້ນໄປ.

ມາດຕາ 7. ການສົມທຽບລາຄາ

ການສົມທຽບລາຄາເປັນຮູບການໜຶ່ງໃນການຈັດຊື້, ກໍ່ສ້າງ, ສ້ອມແປງຂະໜາດນ້ອຍ ຊຶ່ງມີມູນຄ່າແຕ່ 5 ລ້ານກີບ (ຫ້າລ້ານກີບ) ຫາ 100 ລ້ານກີບ (ໜຶ່ງຮ້ອຍລ້ານກີບ) ຊຶ່ງດຳເນີນການຈັດຊື້ໂດຍຫ້ອງການທະນາຄານແຫ່ງ ສປປ ລາວ.

ການສົມທຽບລາຄາຈະຕ້ອງດຳເນີນການ ດັ່ງນີ້:

1. ແຈ້ງໃຫ້ຜູ້ສະໜອງຢ່າງໜ້ອຍ 3 ພາກສ່ວນ ເພື່ອໃຫ້ເຂົາເຈົ້າສົ່ງໃບສະເໜີລາຄາຕາມຈຳນວນ, ມາດຕະຖານເຕັກນິກ ແລະ ເງື່ອນໄຂອື່ນໆ ຕາມຄວາມຕ້ອງການຂອງເຈົ້າຂອງໂຄງການ;
2. ການປະເມີນໃບແຈ້ງລາຄາ ຕ້ອງອີງໃສ່ໃບສະເໜີລາຄາທີ່ຕ່ຳສຸດ ໃນຄຸນນະພາບມາດຕະຖານສິນຄ້າ, ກໍ່ສ້າງ, ສ້ອມແປງ ຫຼື ການໃຫ້ບໍລິການ ອັນດຽວກັນ.

ມາດຕາ 8. ການຈັດຊື້ໂດຍກົງ

ການຈັດຊື້ໂດຍກົງ ແມ່ນການຈັດຊື້ສິນຄ້າ, ອຸປະກອນຮັບໃຊ້ປະຈຳວັນ, ການສ້ອມແປງຂະໜາດນ້ອຍ ຫຼື ການໃຫ້ບໍລິການອື່ນໆ ທີ່ມີມູນຄ່າບໍ່ເກີນ 5 ລ້ານກີບ (ຫ້າລ້ານກີບ) ຊຶ່ງດຳເນີນການຈັດຊື້ໂດຍຫ້ອງການທະນາຄານແຫ່ງ ສປປ ລາວ. ຫ້ອງການທະນາຄານແຫ່ງ ສປປ ລາວ ຈະຕົກລົງຈັດຊື້ໂດຍກົງກັບຜູ້ສະໜອງ ເມື່ອເຫັນວ່າລາຄາສົມເຫດສົມຜົນ.

ມາດຕາ 9. ເອກະສານປະມູນ

ເອກະສານປະມູນຕ້ອງກຳນົດແຈ້ງຂໍ້ມູນທີ່ຈຳເປັນ ເພື່ອໃຫ້ຜູ້ເຂົ້າຮ່ວມແຂ່ງຂັນປະມູນໃຊ້ເປັນບ່ອນອີງເພື່ອພິຈາລະນາຕັດສິນໃຈເຂົ້າຮ່ວມປະມູນ.

ເອກະສານປະມູນປະກອບດ້ວຍເອກະສານຕົ້ນຕໍ ດັ່ງນີ້:

- ໜັງສືເຊີນເຂົ້າປະມູນ, ຕາຕະລາງສະເໜີລາຄາ;
- ມາດຕະຖານເຕັກນິກ;
- ຮູບແບບແຜນວາດຂອງໂຄງການປະມູນ;
- ລາຍການສິນຄ້າ ຫຼື ບໍລິມາດວຽກ;
- ຮ່າງສັນຍາ.

ນອກຈາກນີ້ ຍັງມີເອກະສານຈຳນວນໜຶ່ງເຊັ່ນ: ເງື່ອນໄຂທົ່ວໄປ, ເງື່ອນໄຂສະເພາະ, ການຄ້ຳປະກັນ, ຫຼັກການພື້ນຖານໃນການປະເມີນ ແລະ ຄັດເລືອກເອົາຜູ້ຊະນະການແຂ່ງຂັນປະມູນ, ຂໍ້ແນະນຳເງື່ອນໄຂຜູ້ເຂົ້າຮ່ວມແຂ່ງຂັນປະມູນ ແລະ ເອກະສານອື່ນໆ ທີ່ຄະນະປະມູນເຫັນວ່າມີຄວາມຈຳເປັນ.

ມາດຕາ 10. ຂັ້ນຕອນການປະມູນ

ການປະມູນ ຕ້ອງດຳເນີນຕາມຂັ້ນຕອນດັ່ງນີ້:

1. ການເຊີນເຂົ້າຮ່ວມປະມູນ (ປະກາດ)

ການເຊີນເຂົ້າຮ່ວມປະມູນ ຫຼື ປະກາດໃຫ້ເຂົ້າຮ່ວມການປະມູນ ຕ້ອງເຮັດຢ່າງກ້ວາງຂວາງໂດຍຜ່ານພາຫະນະສື່ມວນຊົນ ແລະ ຈັດສົ່ງໜັງສືເຊີນເຂົ້າຮ່ວມປະມູນຫາບຸກຄົນ ຫຼື ນິຕິບຸກຄົນທີ່ສົນໃຈຢາກເຂົ້າຮ່ວມການປະມູນ ຊຶ່ງໃຊ້ເວລາປະກາດ 3 ອາທິດ ແລະ ຈັດສົ່ງໜັງສືເຊີນເຂົ້າຮ່ວມປະມູນພາຍໃນ 1 ອາທິດ.

2. ການຂາຍເອກະສານປະມູນ

ພາຍຫຼັງທີ່ໄດ້ອອກໜັງສືເຊີນເຂົ້າຮ່ວມປະມູນ, ຄະນະຮັບຜິດຊອບໂຄງການຕ້ອງມີເອກະສານຄົບຖ້ວນສົມບູນຂາຍໃຫ້ບຸກຄົນ ຫຼື ນິຕິບຸກຄົນ ທີ່ສົນໃຈເຂົ້າຮ່ວມປະມູນ ໂດຍບໍ່ມີເງື່ອນໄຂໃດໆຊຶ່ງບຸກຄົນ ຫຼື ນິຕິບຸກຄົນໜຶ່ງຈະສາມາດຊື້ຊອງປະມູນໄດ້ 1 ຊອງເທົ່ານັ້ນ.

3. ການຍື່ນຊອງປະມູນ

ຜູ້ທີ່ມີຈຸດປະສົງເຂົ້າຮ່ວມປະມູນ ຕ້ອງຍື່ນຊອງປະມູນຕາມກຳນົດເວລາ, ຮູບແບບ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ໃນເອກະສານປະມູນ. ຊອງປະມູນທີ່ໄດ້ຍື່ນ ຕ້ອງຮັກສາເປັນຄວາມລັບຈົນກວ່າຈະຮອດເວລາເປີດຊອງປະມູນ.

4. ການເປີດຊອງປະມູນ

ການເປີດຊອງປະມູນ ຈະຕ້ອງປະຕິບັດຕາມກຳນົດເວລາ ແລະ ສະຖານທີ່ ທີ່ກຳນົດໄວ້ໃນເອກະສານປະມູນ. ການເປີດຊອງປະມູນ ຕ້ອງເຮັດຢ່າງເປີດເຜີຍ ໂດຍຊ່ອງໜ້າຜູ້ເຂົ້າຮ່ວມແຂ່ງຂັນປະມູນ ແລະ ຕ້ອງເຮັດບົດບັນທຶກການເປີດຊອງປະມູນ. ບົດບັນທຶກການເປີດຊອງປະມູນປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້: ຊື່ຜູ້ເຂົ້າຮ່ວມການປະມູນ ລວມທັງຜູ້ເຂົ້າຮ່ວມແຂ່ງຂັນປະມູນ, ລາຄາປະມູນ, ລາຄາຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນທີ່ໄດ້ສະເໜີ ແລະ ອື່ນໆ.

5. ການພິຈາລະນາ ຜູ້ຊະນະການປະມູນ

ພາຍຫຼັງເປີດຊອງປະມູນແລ້ວ ຫ້າມມີການເຈລະຈາໃດໆ ກັບຜູ້ເຂົ້າແຂ່ງຂັນປະມູນທາງດ້ານເນື້ອໃນພື້ນຖານການປະມູນ. ຖ້າຄະນະຮັບຜິດຊອບໂຄງການຕ້ອງການຄວາມຈະແຈ້ງບາງຢ່າງ, ຜູ້ເຂົ້າຮ່ວມແຂ່ງຂັນປະມູນຕ້ອງຊີ້ແຈງ ເປັນລາຍລັກອັກສອນ.

ກ່ອນຈະດຳເນີນການປະເມີນຜົນຊອງປະມູນ ຄະນະຮັບຜິດຊອບໂຄງການຕ້ອງກວດກາເບິ່ງຄວາມຖືກຕ້ອງຂອງຊອງປະມູນວ່າ ໄດ້ປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານ ທີ່ໄດ້ກຳນົດໄວ້ໃນເອກະສານປະມູນ ແລະ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້ແລ້ວ ຫຼື ບໍ່. ການປະເມີນຜົນຊອງປະມູນ ຕ້ອງອີງໃສ່ລາຄາ, ຄຸນນະພາບ ແລະ ມາດຕະຖານສິນຄ້າ ທີ່ຜູ້ເຂົ້າຮ່ວມແຂ່ງຂັນໄດ້ສະເໜີເປັນພື້ນຖານໃນການຕົກລົງຮັບຮອງເອົາຜູ້ຊະນະການປະມູນ. ການປະເມີນຜົນຕ້ອງເຮັດໃຫ້ສຳເລັດພາຍໃນ 07 ວັນລັດຖະການ ພາຍຫຼັງວັນເປີດຊອງປະມູນເປັນຕົ້ນໄປ.

6. ການຮັບຮອງຜູ້ຊະນະການແຂ່ງຂັນປະມູນ

ຜູ້ເຂົ້າຮ່ວມແຂ່ງຂັນປະມູນທີ່ຖືກປະເມີນຜົນວ່າສະເໜີລາຄາຕ່ຳ ແລະ ສາມາດສະໜອງສິນຄ້າ ຫຼື ໃຫ້ການບໍລິການທີ່ມີຄຸນນະພາບສູງ ຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນເອກະສານປະມູນຈະຖືວ່າເປັນຜູ້ຊະນະໃນການແຂ່ງຂັນການປະມູນ. ຄະນະຮັບຜິດຊອບໂຄງການ ພິຈາລະນາຜູ້ຊະນະການປະມູນສຳເລັດແລ້ວ ຕ້ອງລາຍງານເປັນລາຍລັກອັກສອນຫາຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາ.

ມາດຕາ 11. ການປະມູນສາກົນ ແລະ ການໃຊ້ບໍລິການທີ່ປຶກສາ ຫຼື ຊ່ຽວຊານ

1. ການປະມູນສາກົນ

ການປະມູນສາກົນສາມາດດຳເນີນຕາມການປະມູນເປີດກວ້າງ ຂອງຂໍ້ຕົກລົງສະບັບນີ້ ແລະ ຕ້ອງແຈ້ງຫາປະເທດຕ່າງໆ ຊຶ່ງການຮັບຮອງເຊັນສັນຍາ ຕ້ອງປະຕິບັດຕາມລະບຽບຂອງກະຊວງການເງິນ ວ່າດ້ວຍການຈັດຊື້, ສິນຄ້າ, ການກໍ່ສ້າງ, ສ້ອມແປງ ແລະ ການບໍລິການ ສະບັບເລກທີ 0063/ກງ ລົງວັນທີ 12 ມີນາ 2004 ແລະ ສະບັບດັດແກ້ ເລກທີ 0861/ກງ ລົງວັນທີ 05 ພຶດສະພາ 2009 ມາດຕາ 29 ວ່າດ້ວຍເງື່ອນໄຂໃນການຕົກລົງເຊັນສັນຍາ ແລະ ຕ້ອງປະຕິບັດພັນທະອື່ນໆ ຕາມລະບຽບກົດໝາຍຂອງ ສປປ ລາວ.

2. ການບໍລິການທີ່ປຶກສາ ຫຼື ຊ່ຽວຊານ

ສຳລັບການບໍລິການທີ່ປຶກສາ ຫຼື ຊ່ຽວຊານຕ່າງໆປະເພດໃຫ້ປະຕິບັດຕາມມາດຕາ 15 ແລະ ມາດຕາ 16 ຕາມລະບຽບຂອງກະຊວງການເງິນ ທີ່ໄດ້ກຳນົດໄວ້ເຊັ່ນດຽວກັນ.

## ພາກທີ III
## ຄະນະຮັບຜິດຊອບໂຄງການ, ເງື່ອນໄຂ ຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ ແລະ ການຊຳລະ

### ມາດຕາ 12. ຄະນະຮັບຜິດຊອບໂຄງການ

ຄະນະຮັບຜິດຊອບໂຄງການຈັດຊື້, ກໍ່ສ້າງ, ສ້ອມແປງ ແລະ ໃຊ້ບໍລິການອື່ນໆ ຂອງທະນາຄານແຫ່ງ ສປປ ລາວ ປະກອບດ້ວຍ 7 – 11 ຄົນ ຊຶ່ງມາຈາກພະແນກບໍລິຫານ, ກົມບັນຊີ-ການເງິນ, ກົມບໍລິການທະນາຄານ, ຜູ້ຕາງໜ້າຂອງບັນດາອົງການຈັດຕັ້ງມະຫາຊົນຂັ້ນຮາກຖານ ທຫລ, ບັນດາກົມທີ່ກ່ຽວຂ້ອງ ແລະ ຂະແໜງການທີ່ກ່ຽວຂ້ອງ (ຖ້າເຫັນວ່າຈຳເປັນ) ຊຶ່ງຖືກແຕ່ງຕັ້ງໂດຍ ຜູ້ວ່າການທະນາຄານແຫ່ງ ສປປ ລາວ. ອາຍຸຂອງຄະນະຮັບຜິດຊອບໂຄງການໃຫ້ນັບແຕ່ວັນຖືກແຕ່ງຕັ້ງຈົນຮອດວັນສຳເລັດການມອບ - ຮັບໂຄງການ. ຄະນະຮັບຜິດຊອບໂຄງການຊຸດເກົ່າສາມາດຖືກແຕ່ງຕັ້ງຄືນໃໝ່ ໄດ້ ແຕ່ບໍ່ໃຫ້ເກີນ 1/3 ຂອງຈຳນວນຄະນະຮັບຜິດຊອບໂຄງການຊຸດເກົ່າ.

### ມາດຕາ 13. ສິດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບໂຄງການ

ຄະນະຮັບຜິດຊອບໂຄງການ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກະກຽມເອກະສານປະມູນໃຫ້ຖືກຕ້ອງ, ຄົບຖ້ວນ;
2. ດຳເນີນການປະມູນຕາມຂັ້ນຕອນທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ດ້ວຍຄວາມບໍລິສຸດສັດຊື່;
3. ຮັກສາຄວາມລັບຂໍ້ມູນຕ່າງໆ ຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ ຈົນກ່ວາຈະມີການຮັບຮອງເອົາຜູ້ຊະນະການປະມູນ;
4. ປະສານສົມທົບກັບບັນດາກົມ ແລະ ພາກສ່ວນກ່ຽວຂ້ອງ ເພື່ອດຳເນີນການປະມູນໃຫ້ສຳເລັດຜົນເປັນຢ່າງດີ;
5. ລາຍງານສະພາບ ແລະ ຜົນຂອງການປະມູນ ໃຫ້ຄະນະຜູ້ວ່າການ ແລະ ຄະນະຫ້ອງການທະນາຄານແຫ່ງ ສປປ ລາວ ພິຈາລະນາ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ.

ມາດຕາ 14. ສິດ ແລະ ໜ້າທີ່ ຂອງຫ້ອງການ ທະນາຄານແຫ່ງ ສປປ ລາວ

ກ່ອນ ແລະ ຫຼັງການປະມູນ ຫ້ອງການ ທະນາຄານແຫ່ງ ສປປ ລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ອຳນວຍຄວາມສະດວກ ແລະ ສະໜອງຂໍ້ມູນທີ່ຈຳເປັນ ທີ່ກ່ຽວຂ້ອງເຖິງການປະມູນໃຫ້ແກ່ຄະນະຮັບຜິດຊອບໂຄງການ;
2. ຊ່ວຍຄະນະຮັບຜິດຊອບໂຄງການ ໃນການກຽມເອກະສານປະມູນ;
3. ເຊັນສັນຍາກັບຜູ້ສະໜອງ ພາຍຫຼັງທີ່ມີຂໍ້ຕົກລົງຮັບຮອງເອົາຜູ້ຊະນະການປະມູນ;
4. ຄຸ້ມຄອງໂຄງການ ແລະ ປະຕິບັດສັນຍາ ທີ່ໄດ້ເຊັນກັບຜູ້ຊະນະການປະມູນ.

ມາດຕາ 15. ເງື່ອນໄຂຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ

ເງື່ອນໄຂຂອງຜູ້ເຂົ້າຮ່ວມການປະມູນ ມີດັ່ງນີ້:

1. ເງື່ອນໄຂສຳລັບນິຕິບຸກຄົນ
   - ເປັນບໍລິສັດ ຫຼື ວິສາຫະກິດຫຸ້ນສ່ວນ ທີ່ຖືກສ້າງຕັ້ງຂື້ນ ໂດຍຖືກຕ້ອງຕາມລະບຽບກົດໝາຍ, ປະຕິບັດພັນທະພາສີ - ອາກອນ ຢ່າງເປັນປົກກະຕິ ແລະ ຄົບຖ້ວນ;
   - ມີຖານະການເງິນດີ ແລະ ມີປະສົບການໃນວຽກງານທີ່ກ່ຽວຂ້ອງ;
   - ມີຄວາມສາມາດສູງທາງດ້ານເຕັກນິກວິຊາການ.
2. ເງື່ອນໄຂສຳລັບບຸກຄົນ
   - ຕ້ອງເປັນຫ້າງຮ້ານ ທີ່ຈົດທະບຽນຖືກຕ້ອງຕາມກົດໝາຍ;
   - ມີຖານະການເງິນດີ ແລະ ມີປະສົບການ;
   - ມີຄວາມສາມາດສູງທາງດ້ານເຕັກນິກວິຊາການ;
   - ເງື່ອນໄຂອື່ນໆ ຕາມທີ່ຄະນະຮັບຜິດຊອບໂຄງການກຳນົດ.

ຜູ້ເຂົ້າຮ່ວມແຂ່ງຂັນການປະມູນ ຕ້ອງມີເງິນຄ້ຳປະກັນການປະມູນຢ່າງໜ້ອຍ 2% ຂອງມູນຄ່າສັນຍາທີ່ຄາດຄະເນໄວ້ ຫຼື ຕາມການກຳນົດໃນເອກະສານປະມູນ.

ມາດຕາ 16. ສິດໃນການຮັບຮອງເອົາຜົນການປະມູນ

ສິດໃນການພິຈາລະນາຮັບຮອງເອົາຜົນການປະມູນ ມີດັ່ງນີ້:

1. ການຮັບຮອງເອົາຜູ້ຊະນະການປະມູນເປີດກວ້າງ.

ຄະນະຮັບຜິດຊອບ ຕ້ອງສະເໜີໃຫ້ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຮອງ;

2. ການຮັບຮອງເອົາຜູ້ຊະນະການປະມູນວົງແຄບ.

ຄະນະຮັບຜິດຊອບ ຕ້ອງສະເໜີໃຫ້ຫົວໜ້າຫ້ອງການ ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຮອງ.

ມາດຕາ 17. ການຊໍາລະ

ທຸກໆໂຄງການພາຍຫຼັງທີ່ຖືກຮັບຮອງຈາກຄະນະຜູ້ວ່າການ ແລະ ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ, ເມື່ອສໍາເລັດໂຄງການແລ້ວ, ຫ້ອງການ ມີໜ້າທີ່ປະຕິບັດການຊໍາລະ. ພາຍຫຼັງທີ່ໄດ້ຊໍາລະໃນແຕ່ລະຄັ້ງ, ຫ້ອງການ ຕ້ອງລາຍງານໃຫ້ຄະນະຜູ້ວ່າການຊາບ.

ມາດຕາ 18. ສິດອະນຸມັດສັ່ງຈ່າຍເງິນ ຂອງຄະນະຜູ້ວ່າການ ແລະ ຫ້ອງການ ທະນາຄານແຫ່ງ ສປປ ລາວ

- ຜູ້ວ່າການທະນາຄານແຫ່ງ ສປປ ລາວ ມີສິດອະນຸມັດສັ່ງຈ່າຍເງິນແຕ່ 1 ຕື້ກີບຂຶ້ນໄປຕໍ່ຄັ້ງຕໍ່ໂຄງການ;
- ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ ມີສິດອະນຸມັດສັ່ງຈ່າຍເງິນແຕ່ 500 ລ້ານກີບ ຫາ 1 ຕື້ກີບຕໍ່ຄັ້ງ ຕໍ່ໂຄງການ;
- ຫົວໜ້າຫ້ອງການ ທະນາຄານແຫ່ງ ສປປ ລາວ ມີສິດອະນຸມັດສັ່ງຈ່າຍເງິນບໍ່ເກີນ 500 ລ້ານກີບຕໍ່ຄັ້ງ ຕໍ່ໂຄງການ

## ພາກທີ IV

## ການກວດກາ ແລະ ມາດຕະການໃນກໍລະນີທີ່ມີການລະເມີດ

ມາດຕາ 19. ການກວດກາ

ກົມກວດກາ ທະນາຄານແຫ່ງ ສປປ ລາວ ສາມາດເຂົ້າກວດກາທຸກຂັ້ນຕອນຂອງການປະມູນຈັດຊື້, ສ້ອມແປງ ແລະ ໃຊ້ບໍລິການອື່ນໆ ຂອງທະນາຄານແຫ່ງ ສປປ ລາວ ຫຼື ດໍາເນີນການກວດກາທາງເອກະສານ ເພື່ອສັງເກດການຕີລາຄາ ຕິດຕາມກວດກາການເຄື່ອນໄຫວປະມູນ ແນໃສ່ຮັບປະກັນຄວາມຖືກຕ້ອງ ແລະ ໂປ່ງໃສໃນການປະມູນ.

ໃນກໍລະນີທາງກວດກາເຫັນວ່າ ການດໍາເນີນການປະມູນບໍ່ຖືກຕ້ອງ ຫຼື ມີຂໍ້ມູນພື້ນຖານພຽງພໍຢັ້ງຢືນວ່າ ການດໍາເນີນການປະມູນຂອງຄະນະຮັບຜິດຊອບບໍ່ໂປ່ງໃສ, ກົມກວດກາ ຕ້ອງລາຍງານຄະນະຜູ້ວ່າການຊາບໂດຍດ່ວນ ເພື່ອກໍານົດມາດຕະການແກ້ໄຂຢ່າງທັນການ.

ມາດຕາ 20. ການສະເໜີຄັດຄ້ານ

ຜູ້ເຂົ້າຮ່ວມແຂ່ງຂັນປະມູນ ສາມາດສະເໜີຄັດຄ້ານການດໍາເນີນງານຂອງຄະນະຮັບຜິດຊອບທີ່ເຫັນວ່າບໍ່ຖືກຕ້ອງ, ບໍ່ເປັນທໍາ ຫຼື ບໍ່ຈະແຈ້ງ. ການສະເໜີຄັດຄ້ານດັ່ງກ່າວ ໃຫ້ຍື່ນຕໍ່ກົມກວດກາ ທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາ.

ມາດຕາ 21. ມາດຕະການໃນກໍລະນີທີ່ມີການລະເມີດ

ໃນກໍລະນີທາງກວດພົບວ່າ ການດໍາເນີນການປະມູນບໍ່ຖືກຕ້ອງ ຫຼື ມີຂໍ້ມູນພື້ນຖານຢັ້ງຢືນວ່າ ການດໍາເນີນການປະມູນ ຂອງຄະນະຮັບຜິດຊອບໂຄງການບໍ່ໂປ່ງໃສ ຊຶ່ງຂັດກັບຂໍ້ຕົກລົງສະບັບ

ນີ້. ຄະນະຜູ້ວ່າການ ມີສິດຍົກເລີກບາງສ່ວນ ຫຼື ທັງໝົດ ຂອງການຕົກລົງ ຂອງຄະນະຮັບຜິດຊອບໂຄງການ, ສັ່ງໂຈະ ແລະ ດຳເນີນການປະມູນຄືນໃໝ່ ຫຼື ເລື່ອນການຮັບຮອງເອົາຜູ້ຊະນະປະມູນຈົນກວ່າຈະມີຂໍ້ມູນທີ່ລະອຽດ-ຖືກຕ້ອງ ພາຍຫຼັງທີ່ມີການກວດກາແລ້ວ.

ຄະນະຮັບຜິດຊອບໂຄງການທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດບາງມາດຕະການ ເຊັ່ນ: ການສຶກສາອົບຮົມ, ຕັກເຕືອນ, ປະຕິບັດວິໄນຕາມລະບຽບລັດຖະກອນ ແລະ ຕາມລະບຽບກົດໝາຍໄດ້ກຳນົດໄວ້.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 22. ການຈັດຕັ້ງປະຕິບັດ**

ຄະນະຮັບຜິດຊອບໂຄງການ, ຫ້ອງການ, ບັນດາກົມ ແລະ ສາຂາ ຂອງທະນາຄານແຫ່ງ ສປປ ລາວ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 23. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນ ຂໍ້ກຳນົດວ່າດ້ວຍ ການຈັດຊື້, ການກໍ່ສ້າງ, ສ້ອມແປງ ແລະ ການໃຊ້ບໍລິການ ດ້ວຍທຶນຂອງ ທຫລ ສະບັບເລກທີ 01 /ທຫລ ລົງວັນທີ 13 ມັງກອນ 2006 ແລະ ຂໍ້ຕົກລົງວ່າດ້ວຍສິດອະນຸມັດສັ່ງຈ່າຍເງິນຂອງຄະນະຜູ້ວ່າການ ແລະ ຄະນະຫ້ອງການ ສະບັບເລກທີ 953/ທຫລ ລົງວັນທີ 25 ຕຸລາ 2011.

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ.

ທະນາຄານແຫ່ງ ສປປ ລາວ ຜູ້ວ່າການ

ດຣ. ສົມພາວ ໄຟສິດ